Australian Government
Department of Foreign Affairs and Trade



# ແຜນງານເພື່ອການຊ່ວຍເຫຼືອ

## ແຜນງານ ສໍາລັບ ສປປ ລາວ

2015-16 ຫາ 2019-20

ແຜນງານເພື່ອການຊ່ວຍເຫຼືອນີ້ ຈະເປັນພື້ນຖານໃນການຈັດຕັ້ງປະຕິບັດ ການຊ່ວຍເຫຼືອ ຂອງ ອົດສະຕຣາລີ ຢູ່ ສປປ ລາວ ແຕ່ປີ 2015-16 ຫາ 2019-20 ແລະ ເປັນແຜນທີ່ສອດຄ່ອງກັບ ແຜນຍຸດທະສາດການພັດທະນາ 5 ປີ ຂອງລາວ.

## *ຈຸດປະສົງດ້ານຍຸດທະສາດ ແລະ ເຫດຜົນ*

ອົດສະຕຣາລີ ມີຄວາມມຸ້ງຫວັງ ທີ່ຈະ ເຫັນປະເທດລາວ ມີການພັດທະນາ ຢ່າງຕໍ່ເນື່ອງ ກາຍເປັນປະເທດບ້ານໃກ້ເຮືອນຄຽງ ທີ່ມີສະຖຽນລະພາບ ແລະ ມີສະຖານະທີ່ຈະປະກອບສ່ວນຢ່າງຕັ້ງໜ້າ ໃນການເສີມສ້າງຄວາມໝັ້ນຄົງ ແລະ ຄວາມຈະເລີນຮຸ່ງເຮືອງໃນພາກພື້ນນີ້. ເປົ້າໝາຍການຊ່ວຍເຫຼືອໃຫ້ແກ່ລາວ ແມ່ນການສ້າງຄວາມຮຸ່ງເຮືອງ ແລະ ຫລຸດຜ່ອນຄວາມ ທຸກຍາກ, ພ້ອມກັນນັ້ນ ກໍ່ຊ່ວຍເຫຼືອ ລາວ ຍາດແຍ່ງປະໂຫຍດ ຈາກການເຊື່ອມໂຍງເສດຖະກິດ ກັບບັນດາປະເທດໃນພາກພື້ນ. ການຂະຫຍາຍຕົວຂອງເສດຖະກິດ ແລະ ເງື່ອນໄຂໃນການເຮັດທຸລະກິດທີ່ສະດວກຂຶ້ນ ຈະຊ່ວຍເພີ່ມໂອກາດ ໃນການຮ່ວມມືທາງເສດຖະກິດໃນຕໍ່ໜ້າ.

ການພັດທະນາທາງດ້ານເສດຖະກິດຂອງລາວ ມີຄວາມຄືບໜ້າຫຼາຍດ້ານ ນັບຕັ້ງແຕ່ມີການປະຕິຮູບກົນໄກທາງດ້ານເສດຖະກິດ ໃນຊຸມປີ 1980. ເຖິງແມ່ນວ່າ ມາດຕະຖານຊີວິດການເປັນຢູ່ຂອງປະຊາຊົນຫຼາຍຄົນ ໄດ້ຮັບການປັບປຸງກໍ່ຕາມ, ປະເທດລາວ ກໍ່ຍັງປະເຊີນກັບສິ່ງທ້າທາຍໃນການພັດທະນາຫຼາຍດ້ານ. ປະຊາຊົນບໍ່ໄດ້ຮັບຜົນປະໂຫຍດ ຈາກການຂະຫຍາຍຕົວທາງດ້ານເສດຖະກິດ ຢ່າງສະເໝີພາບກັນ ແລະ ຈຳນວນຕົວຊີ້ວັດການພັດທະນາດ້ານສັງຄົມ ກໍ່ຍັງຢູ່ໃນລະດັບຕໍ່າຫຼາຍ. ໂອກາດທາງການສຶກສາ ກໍ່ມີຄວາມແຕກຕ່າງ ຂຶ້ນກັບພູມສັນຖານ, ເພດ, ແລະ ຊົນເຜົ່າ.

ຂະແໜງຊັບພະຍາກອນ, ເຊິ່ງມີບໍ່ແຮ່ ແລະ ພະລັງງານໄຟຟ້າເປັນຕົ້ນ, ຍັງຈະສືບຕໍ່ເປັນຕົວຂັບເຄື່ອນການຂະຫຍາຍຕົວດ້ານເສດຖະກິດ ແລະ ການຄ້າ. ປະສິດຕິພາບໃນການຄຸ້ມຄອງຂະແໜງດັ່ງກ່າວ ແລະ ການຈັດສັນລາຍຮັບຈາກຂະແໜງນີ້ ຈະ ສົ່ງຜົນໂດຍກົງຕໍ່ຄຸນນະພາບການຂະຫຍາຍຕົວ ແລະ ການກະຈາຍລາຍຮັບໃນປະເທດລາວ.

ລັດຖະບານລາວ ຕ້ອງພະຍາຍາມຊຸກຍູ້ການລົງທຶນ ໃນຂະແໜງອື່ນໆ ໃຫ້ຫຼາຍຂຶ້ນ ເພື່ອຂະຫຍາຍພື້ນຖານເສດຖະກິດຂອງຕົນ ແລະ ຮັບປະກັນໂອກາດທາງທຸລະກິດ ໃຫ້ມີຄວາມເທົ່າທຽມຫຼາຍຂຶ້ນ. ບັນຫາດັ່ງກ່າວ ມັນຮຽກຮ້ອງໃຫ້ມີມາດຕະການ ເພື່ອປັບປຸງບັນຍາກາດການລົງທຶນ ໂດຍສະເພາະ ບັນຫາການສໍ້ລາດບັງຫຼວງພາສີອາກອນ, ການເຂົ້າຫາແຫລ່ງທຶນ ແລະ ກຳລັງສີມືແຮງງານໃຫ້ຫຼາຍຂຶ້ນ.

ສະນັ້ນ, ເພື່ອເພີ່ມປະສິດທິພາບຂອງງົບປະມານການຊ່ວຍເຫຼືອ, ແຜນງານການຊ່ວຍເຫຼືອນີ້ຈະສຸມໃສ່ 3 ຈຸດປະສົງ ຄື: ການສຶກສາຂັ້ນພື້ນຖານ, ການພັດທະນາຊັບພະຍາ ກອນມະນຸດ ແລະ ການສ້າງລະບອບການຄ້າໃຫ້ເຂັ້ມແຂງ ແລະ ພາກເອກະຊົນທີ່ສາມາດແຂ່ງຂັນໄດ້ໃຫ້ຫຼາຍຂຶ້ນ. ໃນກອບດັ່ງກ່າວ ການຊ່ວຍເຫຼືອດ້ານການພັດທະນາຊົນນະບົດ ຈະບໍ່ມີການສືບຕໍ່, ແຕ່ກໍ່ຄາດຫວັງທີ່ຈະໄດ້ເຫັນໝາກຜົນຈາກໂຄງການດັ່ງກ່າວຫຼາຍພໍສົມຄວນ ກ່ອນທີ່ການຊ່ວຍເຫຼືອດ້ານນີ້ຈະສິ້ນສຸດລົງ ເຊັ່ນ: ໂຄງການການເງິນ, ໂຄງການປັບປຸງຊີວິດການເປັນຢູ່ ແລະ ເກັບກູ້ລະເບີດທີ່ຍັງບໍ່ທັນແຕກ.

**ຈຸດປະສົງ 1 : ເດັກນ້ອຍຍິງ ແລະ ຊາຍ ທີ່ມາຈາກສະພາບຄອບຄົວທີ່ຫຍຸ້ງຍາກ ຮຽນຈົບຊັ້ນປະຖົມທີ່ມີຄຸນນະພາບ ມີຈຳນວນເພີ່ມຂຶ້ນ**

ບັນດາແຮງງານ ທີ່ມີການສຶກສາບໍ່ພຽງພໍ ເປັນອຸປະສັກໃນການພັດທະນາ, ການຈ້າງງານ ແລະ ການລົງທຶນໃນ ສປປ ລາວ, ໂດຍສະເພາະ ໃນສະພາບທີ່ເຂົ້າຮ່ວມປະຊາຄົມເສດຖະກິດອາຊຽນ. ດັ່ງນັ້ນ, ການສຶກສາ ຈຶ່ງເປັນບູລິມະສິດ ສຳລັບ ລັດຖະບານລາວ ແລະ ສຳລັບ ແຜນງານຊ່ວຍເຫຼືອຂອງລັດຖະບານອົດສະຕຣາລີ.

ບົນພື້ນຖານການຊ່ວຍເຫຼືອທີ່ມີມາຍາວນານ ຈາກລັດຖະບານອົດສະຕຣາລີ ແລະ ການເປັນຜູ້ນຳພາໃນຂະແໜງນີ້, ໂຄງການໄລຍະທຳອິດຂອງອົດສະຕຣາລີ ກໍ່ຄື ແຜນງານການປັບປຸງຄຸນນະພາບ ແລະ ຂະຫຍາຍການເຂົ້າຮຽນສຳລັບການສຶກສາຂັ້ນພື້ນຖານຢູ່ ສປປ ລາວ (BEQUAL) 2015-19 ຈະຖືກຈັດຕັ້ງປະຕິບັດຢູ່ໃນ 66 ເມືອງ ທີ່ມີຄວາມຫຍຸ້ງຍາກດ້ານການສຶກສາຫຼາຍທີ່ສຸດ ເພື່ອໃຫ້: ເພີ່ມການມີສ່ວນຮ່ວມຂອງນັກຮຽນ, ປັບປຸງສະພາບແວດລ້ອມການຮຽນ (ຕົວຢ່າງ: ຝຶກອົບຮົມຄູໃໝ່ຈຳນວນ 520 ຄົນ ທີ່ຮັບມາຈາກເມືອງທີ່ມີຄວາມຫຍຸ້ງຍາກ). ໂຄງການນີ້ ຈະນຳໃຊ້ປະສົບການຈາກອົງການຫຼາຍຝ່າຍຕ່າງໆ , ບໍລິສັດ ທີ່ຈັດຕັ້ງປະຕິບັດໂຄງການ ແລະ ອົງກອນທີ່ບໍ່ຂຶ້ນກັບລັດຖະບານ.

**ຈຸດປະສົງ 2 : ສົ່ງເສີມຊັບພະຍາກອນມະນຸດ ຜ່ານ ທຶນການສຶກສາ, ການຝຶກອົບຮົມ ແລະ ການສ້າງຄວາມສາມາດໃຫ້ແກ່ອົງກອນ**

ການສ້າງຊັບພະຍາກອນມະນຸດໃຫ້ມີຄວາມເຂັ້ມແຂງ ແມ່ນເປັນພື້ນຖານທີ່ຈຳເປັນຕໍ່ການເຕີບໂຕທາງເສດຖະກິດຂອງລາວ ແລະ ການແຂ່ງຂັນ, ພ້ອມທັງສ້າງຄວາມສາມາດ ໃຫ້ປະຊາ ຊົນ ເຂົ້າເຖິງ ການບໍລິການທາງສັງຄົມທີ່ຈຳເປັນ ເພື່ອການພັດທະນາທີ່ມີຄວາມສະເໝີພາບ. ການຊ່ວຍເຫຼືອຂອງລັດຖະບານອົດສະຕຣາລີ ຈະສືບຕໍ່ໃຫ້ການສະໜັບສະໜູນວຽກງານພັດທະນາຊັບພະຍາກອນມະນຸດ ບົນພື້ນຖານຜົນໄດ້ຮັບອັນດີ ສືບຕໍ່ຈາກໂຄງການທຶນການສຶກສາທີ່ມີມາຍາວນານ (ທັງຮຽນ ຢູ່ ອົດສະຕຣາລີ ແລະ ຢູ່ໃນລາວ) ແລະ ທຶນອື່ນໆ ທີ່ມາຈາກ New Colombo Plan.

ເພື່ອໃຫ້ເຫັນເຖິງຊ່ອງວ່າງທີ່ຍັງຄົງຄ້າງໃນການສ້າງຄວາມເຂັ້ມແຂງໃນດ້ານຊັບພະຍາກອນມະນຸດນັ້ນ, ຈຸດສຸມຂອງລັດຖະບານອົດສະຕຣາລີ ຈະແມ່ນການພັດທະນາຄວາມເຂັ້ມແຂງ ດ້ານບຸກຄະລະກອນ ແລະ ສະຖາບັນໃຫ້ແກ່ອົງການເປົ້າໝາຍຂອງລາວ ຊຶ່ງຈະເຮັດວຽກຮ່ວມກັບບັນດາສະຖາບັນ ທີ່ຮັບຜິດຊອບໃນການສົ່ງເສີມຄວາມສະເໝີພາບບົດບາດຍິງ-ຊາຍ ແລະ ການມີສ່ວນຮ່ວມຂອງຄົນພິການ ເພື່ອຮັບປະກັນວ່າ ການຊ່ວຍເຫຼືອຂອງພວກເຮົານັ້ນ ໄດ້ຊ່ວຍນະໂຍບາຍດ້ານການພັດທະນາບຸກຄະລະກອນໃຫ້ມີສ່ວນຮ່ວມ.

**ຈຸດປະສົງທີ່ 3: ສ້າງລະບົບການຄ້າທີ່ເຂັ້ມແຂງ ແລະ ສ້າງການແຂ່ງຂັນຂອງພາກເອກະຊົນໃຫ້ຫຼາຍຂຶ້ນ**

ແຜນງານການຊ່ວຍເຫຼືອຂອງອົດສະຕຣາລີ ຈະສືບຕໍ່ການຊ່ວຍເຫລື່ອລາວ ໃຫ້ເຊື່ອມໂຍງເຂົ້າສູ່ລະບົບ ການຄ້າໃນລະດັບພາກພື້ນ ແລະ ຫຼາຍຝ່າຍ. ພາຍຫລັງທີ່ໄດ້ສະໜັບສະໜູນລາວເຂົ້າເປັນສະມາຊິກອົງການການຄ້າໂລກ (WTO) ໃນ ປີ 2013 ແລ້ວ ໜ້າວຽກໃນຕໍ່ໜ້າຈະໄດ້ສຸມໃສ່ການພັດທະນາຄຸນພາບ ແລະ ຄວາມຍືນຍົງຂອງການຂະຫຍາຍໂຕດ້ານການຄ້າ ແລະ ການລົງທຶນ. ພວກເຮົາຈະໄດ້ປະຕິບັດ ໂດຍມີເປົ້າໝາຍຄື: ໃຫ້ການຊ່ວຍເຫຼືອລາວໃນການຈັດຕັ້ງປະຕິບັດ ພັນທະສັນຍາຕໍ່ອົງ ການການຄ້າໂລກ, ຫລຸດຄ່າໃຊ້ຈ່າຍໃນດ້ານການຄ້າໂດຍການຫລຸດຂັ້ນຕອນທີ່ຊັບຊ້ອນຢູ່ແຕ່ເຂດຊາຍແດນລົງ, ປັບປຸງມາດຕະຖານແຮງງານ ແລະ ທັກສະຕ່າງໆໃນອຸດສາຫະກຳການສົ່ງອອກ ເປັນຕົ້ນວ່າ: ອຸດສະຫະກຳຕັດຫຍິບ; ແລະ ຊ່ວຍລາວເຮົາໃນການບໍລິຫານແຜນການເຊື່ອມໂຍງເສດຖະກິດອາຊຽນ (ASEAN) ຢ່າງມີປະສິດທິພາບ ໃນລະຫວ່າງການເປັນປະທານກອງປະຊຸມອາຊຽນ ປີ2016. ພ້ອມນັ້ນພວກເຮົາຍັງ ໃຫ້ຊ່ວຍເຫຼືອດ້ານການເງິນ ແລະ ໃຫ້ຄຳປຶກສາ ແກ່ພາກທຸລະ

ກິດໃນລາວ ເພື່ອປັບປຸງການແຂ່ງຂັນ ແລະ ຄວາມສາມາດໃນການສົ່ງອອກຂອງລາວເຮົາ, ໂດຍຈະເອົາໃຈໃສ່ຜູ້ປະກອບການຍິງເປັນພິເສດ.

## *ວິທີຈັດຕັ້ງປະຕິບັດ*

ເພື່ອປັບປຸງວິໃສທັດ ແລະ ການຄຸ້ມຄອງບໍລິຫານການຊ່ວຍເຫຼືອຂອງລັດຖະບານອິດສະຕຣາລີ ທີ່ດໍາເນີນການຢູ່ໃນລາວ, ພວກເຮົາຈະເບິ່ງ ເລື່ອງການອອກແບບ ແລະ ການຈັດຕັ້ງປະຕິບັດກິດຈະກໍາທີ່ເພີ່ມຂຶ້ນໂດຍກົງກັບພາກລັດຂອງລາວ ຫຼາຍກວ່າການໃຊ້ທຶນໂຄງການຜ່ານອົງການອື່ນໆ. ໂດຍສະ ເພາະກໍ່ຄືຢູ່ໃນຂະແໜງການສຶກສາ ຊຶ່ງພວກເຮົາຈະຕ້ອງ ຮັບປະກັນໃຫ້ ການບໍລິຫານໄດ້ຮັບການປັບປຸງ, ການຕິດຕາມກວດກາມີຄຸນນະພາບ, ມີການຕິດຕໍ່ພົວພັນໂດຍກົງກັບພາກລັດ ແລະ ວິ ໃສທັດດ້ານການຊ່ວຍເຫຼືອຂອງລັດຖະບານອົດສະຕຣາລີ.

ຮັບຮູ້ເຖິງທຶນຮອນ ສໍາລັບ ການພັດທະນາ ທີ່ລັດຖະບານລາວສາມາດນໍາມາສົມທົບໄດ້ໃນອານາຄົດ, ທາງລັດຖະບານອົດສະຕຣາລີ ຈະອອກແບບກິດຈະກໍາການຊ່ວຍເຫຼືອ ໂດຍໃຫ້ບົດບາດ ແລະ ການປະກອບສ່ວນ ຂອງລັດຖະບານອົດສະຕຣາລີ ແລະ ລັດຖະບານລາວ ມີຄວາມຊັດເຈນ. ໂດຍສະເພາະ ເບື້ອງລັດຖະບານອົດສະຕຣາລີ ຈະໄດ້ຮຽກຮ້ອງໃຫ້ລັດຖະບານລາວເພີ່ມຈໍານວນ ແລະ ສັດສ່ວນຂອງທຶນສົມທົບຫຼາຍຂຶ້ນ ໃນຂະແໜງການສຶກສາ.

ນອກນັ້ນ, ລັດຖະບານອົດສະຕຣາລີ ຍັງຈະສ້າງຄວາມເຂັ້ມແຂງໃນການມີສ່ວນຮ່ວມກັບພາກເອກະຊົນໃນການສະໜອງການຊ່ວຍເຫຼືອ ຊຶ່ງຈະໄດ້ຍົກລະດັບການສະໜອງທຶນຮອນຂອງພາກເອກະຊົນ ເພື່ອແນ່ໃສ່ການພັດທະນາ ແລະ ເປັນຄູ່ຮ່ວມງານກັບບໍລິສັດທີ່ມີຜົນປະໂຫຍດຮ່ວມກັນ ໂດຍມີເປົ້າໝາຍເພື່ອປັບປຸງສະພາບແວດລ້ອມທາງທຸລະກິດ ຢູ່ໃນລາວ.

## *ການບໍລິຫານການປະຕິບັດງານ*

ກະຊວງການຕ່າງປະເທດອົດສະຕຣາລີ ຈະລາຍງານຄວາມຄືບໜ້າຕໍ່ກັບມາດຕະຖານເຫລົ່ານີ້ ສໍາລັບ ການຊ່ວຍເຫຼືອທີ່ສໍາຄັນ ຜ່ານບົດລາຍງານການປະຕິບັດໂຄງການຊ່ວຍເຫລື່ອປະຈໍາປີ ຊຶ່ງແນໃສ່ໃຫ້ບັນລຸໃນປີ 2015-2016 ທີ່ໄດ້ກໍານົດໄວ້ດັ່ງລຸ່ມນີ້

**ຈຸດປະສົງ 1 - ເດັກນ້ອຍຍິງ ແລະ ຊາຍ ທີ່ມາຈາກສະພາບຄອບຄົວທີ່ຫຍຸ້ງຍາກ ຮຽນຈົບຊັ້ນປະຖົມທີ່ມີຄຸນນະພາບ ມີຈໍານວນເພີ້ມຂຶ້ນ.**

| | | |
|---|---|---|
| *ມາດຕະຖານ* | - | 4 ສ່ວນຮ້ອຍ ຂອງ ຈໍານວນເດັກນ້ອຍທີ່ອອກໂຮງຮຽນປະຖົມຊັ້ນປໍ 1. |
| *ການປະຕິບັດງານ* | - | ຄູຝຶກຫັດ ຈໍານວນ 220 ຄົນ (ຢ່າງໜ່ອຍ 60% ເປັນເພດຍິງ) ຈາກ ເຂດຊົນນະບົດ ໄດ້ຮັບການຝຶກອົບຮົມ ຢູ່ ໃນວິທະຍາໄລຝຶກອົບຮົມຄູແຫ່ງຕ່າງໆ. |

**ຈຸດປະສົງ 2 - ສົ່ງເສີມຊັບພະຍາກອນມະນຸດ ຜ່ານ ທຶນການສຶກສາ, ການຝຶກອົບຮົມ ແລະ ການສ້າງຄວາມສາມາດໃຫ້ແກ່ອົງກອນ**

| | | |
|---|---|---|
| *ມາດຕະຖານ ການປະຕິບັດງານ* | - | ຜູ້ທີ່ມີຄຸນສົມບັດ ຈໍານວນ 30 ຄົນ (ຢ່າງໜ້ອຍ ຍິງ 15 ຄົນ) ຈະໄດ້ຮັບທຶນການສຶກສາ ເພື່ອໄປຮຽນຕໍ່ ຢູ່ ປະເທດອົດສະຕຣາລີ. |
| | - | ກະຊວງສຶກສາທິການ ແລະ ກິລາ ອະນຸມັດແຜນພັດທະນາຊັບພະຍາກອນ |

ມະນຸດແຫ່ງຊາດ ອີງໃສ່ ຂັ້ນຕອນການປະເມີນອີງກອນທີ່ລະອຽດ.

**ຈຸດປະສົງ 3 - ການສ້າງລະບົບການຄ້າໃຫ້ເຂັ້ມແຂງ ແລະ ສ້າງການແຂ່ງຂັນໃນພາກເອກະຊົນໃຫ້ຫຼາຍຂຶ້ນ**

*ມາດຕະຖານການປະຕິບັດງານ* - ມີຫຼາຍກວ່າ 30 ທຶນຊ່ວຍເຫຼືອ ໄດ້ອອກໃຫ້ແກ່ນັກທຸລະກິດລາວ ເພື່ອຊ່ວຍເພີ່ມຍອດຂາຍຂອງພວກເຂົາ.

## *ພັນທະທີ່ມີຮ່ວມກັນ*

ສະແດງໃຫ້ເຫັນເຖິງຄວາມສໍາຄັນຂອງໜ້າທີ່ຮັບຜິດຊອບຮ່ວມກັນ ຊຶ່ງລັດຖະບານລາວ ໄດ້ສ້າງພັນທະສັນ ຍາດ້ານນະໂຍບາຍທີ່ຫຼາກຫຼາຍ ຢູ່ໃນບັນດາເອກະສານການວາງແຜນແຫ່ງຊາດ ທີ່ເປັນການສະໜັບສະໜູນພັນທະສັນຍາຂອງລັດຖະບານອົດສະຕຣາລີ ເພື່ອສະໜອງແຜນງານຊ່ວຍເຫຼືອທີ່ມີປະສິດທິພາບ ແລະ ປະສິດທິຜົນ ຊຶ່ງພັນທະສັນຍາຫລັກໆຂອງລັດຖະບານລາວ ກໍ່ຄື:

- ສ່ວນແບ່ງຂອງງົບປະມານຂອງລັດທັງໝົດທີ່ນໍາໃຊ້ເຂົ້າໃນການສຶກສານັ້ນ ໄດ້ເພີ່ມຂຶ້ນທຸກໆ ປີ (ຂຶ້ນກັບການພິຈາລະນາຈາກພາຍນອກ) ແລະ ງົບປະມານການສຶກສາ ໄດ້ກໍານົດສັດສ່ວນການ ເພີ່ມຂຶ້ນຂອງທຶນໃຫ້ແກ່ຄ່າໃຊ້ຈ່າຍ ທີ່ບໍ່ແມ່ນຄ່າແຮງງານທີ່ເກີດຂຶ້ນ;
- ດ້ວຍເຫດນັ້ນ, ລັດຖະບານລາວ ຈຶ່ງໄດ້ສ້າງໜ່ວຍງານມາດຕະການຍົກເວັ້ນພາສີ (Non-Tariff Measures (NTMs) Working Group) ແລະ ຂະບວນການດັ່ງກ່າວນີ້ ຈະນໍາໄປສູ່ການຫລຸດພາສີຢູ່ໃນມາດຕະການຍົກເວັ້ນພາສີ ທີ່ທຸລະກິດຕ້ອງປະເຊີນຢູ່.

### *ການຕິດຕາມ, ທົບທວນ ແລະ ປະເມີນຜົນ*

ກອບການປະເມີນຜົນການປະຕິບັດງານ ໄດ້ຖືກພັດທະນາຂຶ້ນ ເພື່ອແນ່ໃສ່ແຜນງານຂອງລາວ ເພື່ອຮັບປະກັນວ່າມັນໄດ້ສະໜອງຜົນການພັດທະນາ ແລະ ສະແດງໃຫ້ເຫັນເຖິງຄວາມຄຸ້ມຄ່າ. ບົດລາຍງານການປະຕິບັດແຜນງານຊ່ວຍເຫຼືອປະຈໍາປີ ຈະລາຍງານເຖິງ ຄຸນນະພາບການຊ່ວຍເຫຼືອ ແລະ ລະບຸການດໍາເນີນການແກ້ໄຂທີ່ຈໍາເປັນ. ຈະໄດ້ມີການດໍາເນີນການປະເມີນຜົນ ສໍາລັບການຊ່ວຍເຫຼືອ ຫຼາຍກວ່າ 10 ລ້ານໂດລ້າອົດສະຕຣາລີ ແລະ ການຊ່ວຍເຫຼືອທີ່ໄດ້ຮັບປະສິດທິພາບຕໍ່າ ຫລື ຄູ່ຮ່ວມງານບໍ່ສາມາດປະຕິບັດໄດ້ດີ ຈະໄດ້ຮັບການແກ້ໄຂໃຫ້ທັນເວລາ.

ຂັ້ນຕອນການປະເມີນຜົນການປະຕິບັດງານ ຈະນໍາໃຊ້ຂໍ້ມູນແຍກເພດ ເພື່ອບອກໃຫ້ຮູ້ເຖິງການປະຕິບັດຕົວຈິງກ່ຽວກັບ ບັນຫາຄວາມສະເໝີພາບຂອງບົດບາດຍິງ-ຊາຍໃນອານາຄົດ. ຢູ່ໃນພັນທະສັນຍາຂອງຂະແໜງການສຶກສານັ້ນ ທາງລັດຖະບານອົດສະຕຣາລີ ຈະໄດ້ເອົາໃຈໃສ່ເຖິງດ້ານພູມມີສາດ, ຊົນຊາດຊົນເຜົ່າ ແລະ ເພດ ເຂົ້າໃນການປະເມີນຜົນກະທົບຂອງການຊ່ວຍເຫຼືອ. ຢູ່ໃນພັນທະສັນຍາຂອງຂະແໜງການຄ້າເອງ ກໍ່ຈະພິຈາລະນາເຖິງຜົນກະທົບຂອງການຊ່ວຍເຫຼືອຫລັກໆ ກ່ຽວກັບ ນັກທຸລະກິດຍິງ ແລະ ກ່ຽວກັບແມ່ຍິງທີ່ເຮັດວຽກຢູ່ໃນອຸດສາຫະກໍາເຄື່ອງນຸ່ງຮົ່ມ.